# <u>ບົດກ່າວເປີດ</u>

## <u>ໂດຍ: ທ່ານ ນ. ພອນອັນ ອຸທະວົງ ຮອງລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ</u>

## ໃນກອງປະຊຸມ ປະທານ ແລະ ປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ

*ໃນວັນທີ 3 ກໍລະກົດ 2024, ທີ່ ໂຮງແຮມ ລາວ ປຼາຊາ ນະຄອນຫຼວງວຽງຈັນ*

---

**ຮຽນ: - ທ່ານ ບັກໂຕເດັຍ ເບີຄານ່ອຟ ຜູ້ປະສານງານອົງການສະຫະປະຊາຊາດ ປະຈໍາ ສປປ ລາວ ທີ່ນັບຖື;**

- **ບັນດາ ທ່ານ ຮອງລັດຖະມົນ ທີ່ນັບຖື;**
- **ບັນດາທ່ານທູດ, ທູຕານຸທູດ, ບັນດາທ່ານຜູ້ຕາງໜ້າອົງການຈັດຕັ້ງສາກົນ ແລະຄູ່ຮ່ວມພັດທະນາ ທີ່ນັບຖື;**
- **ບັນດາທ່ານຜູ້ຕາງໜ້າຈາກກະຊວງ/ຂະແໜງການ ທີ່ນັບຖື;**
- **ບັນດາທ່ານແຂກທີ່ມີກຽດ ທ່ານ ຍິງ ແລະທ່ານຊາຍ ທີ່ຮັກແພງ.**

ຂ້າພະເຈົ້າ ໃນນາມຕາງໜ້າໃຫ້ ກະຊວງແຜນການ ແລະການລົງທຶນ ກໍ່ຄືລັດຖະບານ ສປປ ລາວ ຂໍສະແດງຄວາມຍິນດີຕ້ອນຮັບ ແລະ ຂໍຂອບໃຈ ບັນດາທ່ານແຂກຜູ້ມີກຽດ ທີ່ໄດ້ສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມໃນມື້ນີ້, ຂ້າພະເຈົ້າຮູ້ສຶກເປັນກຽດ ແລະ ມີຄວາມຍິນດີຢ່າງຍິ່ງ ທີ່ໄດ້ເຂົ້າຮ່ວມເປັນ ປະທານ ແລະກ່າວໄຂກອງປະຊຸມ ປະທານ-ປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມ ພັດທະນາ ພາຍໃຕ້ກົນໄກຂອງຂະບວນການໂຕະມົນ ເພື່ອກ້າວໄປສູ່ການທ້າງຫາກະກຽມ ຈັດກອງປະຊະຊຸມໂຕະມົນ ປະຈໍາປີ 2024.

ຈຸດປະສົງຂອງ ກອງປະຊຸມຄັ້ງນີ້ ແມ່ນເພື່ອປຶກສາຫາລື ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ຂະບວນການໂຕະມົນ ເປັນຕົ້ນແມ່ນ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ສິ່ງທີ່ພວກເຮົາໄດ້ປຶກສາຫາລືນໍາກັນ ຢູ່ ກອງປະຊຸມໂຕະມົນ ປະຈໍາປີ 2023 ທີ່ຜ່ານມາ. ລວມທັງ ຮ່າງເບື້ອງຕົ້ນຂອງ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ 10 (2021-2025) ແລະ ຮ່າງແນວຄວາມຄິດຂອງ ກອງປະຊຸມໂຕະມົນ ປະຈໍາປີ 2024 ເຊິ່ງ ຄາດວ່າຈະຈັດ ໃນຕົ້ນເດືອນ ພະຈິກ 2024 ນີ້.

ບັນດາທ່ານທີ່ນັບຖື ດັ່ງທີ່ບັນດາທ່ານຊາບ ຂະບວນການໂຕະມົນ ເປັນເວທີທີ່ສໍາຄັນ ໃນການປຶກ ສາຫາລື ແລະ ເຮັດວຽກຮ່ວມກັນ ລະຫວ່າງລັດຖະບານ, ຄູ່ຮ່ວມພັດທະນາ ແລະອົງການຈັດຕັ້ງສາກົນ ທີ່ ໃຫ້ການສະໜັບສະໜູນ ຊ່ວຍເຫລືອ ລັດຖະບານ ສປປ ລາວ ເຊິ່ງໜ່ວຍງານຂະແໜງການ ກົນໄກໜຶ່ງທີ ສໍາຄັນ ພາຍໃຕ້ກົນໄກຂະບວນການໂຕະມົນ ເພື່ອປຶກສາຫາລື ກ່ຽວກັບ ຄວາມຄືບໜ້າໃນການຈັດຕັ້ງ ປະຕິບັດ ວຽກງານບູລິມະສິດຂອງໜ່ວຍງານຂະແໜງການ, ຊຶ່ງໃນໄລຍະຜ່ານມາ ໄດ້ປະກອບສ່ວນເຂົ້າ ໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

*ບັນດາທ່ານ ທີ່ນັບຖື ແລະຮັກແພງ,*

ດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າ, ກອງປະຊຸມສະພາແຫ່ງຊາດ ຫາກໍ່ສຳເລັດລົງໃນມື້ວານນີ້ ວັນທີ 2 ກໍລະກົດ 2024 ດ້ວຍຜົນສຳເລັດ ຕາມຄາດໝາຍທີ່ວາງໄວ້, ຊຶ່ງ ກອງປະຊຸມສະພາແຫ່ງຊາດ ກໍ່ໄດ້ຮັບຮອງເອົາບົດສະຫລຸບລາຍງານການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ 2024 ແລະ ແຜນວຽກຈຸດສຸມ ແລະ ມາດຕະການໃນການຈັດຕັ້ງປະຕິບັດ ຂອງ ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນທ້າຍປີ 2024, ຊຶ່ງມີອັດຕາການເຕີບໂຕ ລວມຍອດຜະລິດຕະພັນພາຍໃນ ໃນ 6 ເດືອນ ຕົ້ນປີ 2024 ແມ່ນບັນລຸ 4,5 ສ່ວນຮ້ອຍ, ນອກນີ້ ລັດຖະບານ ຍັງຈະສືບຕໍ່ ສຸມໃສ່ ແກ້ໄຂບັນຫາທີ່ເຄັ່ງຮ້ອນເຊັ່ນ: ສຸມໃສ່ການຈັດຕັ້ງປະຕິບັດ ວາລະແຫງຊາດວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ, ເປັນຕົ້ນ ການເພີ້ມຂຶ້ນອັດຕາເງິນເຟີ້, ການອ່ອນຄ່າຂອງເງິນກີບ, ລາຄາສິນຄ້າ ດ້ວຍການປະຕິບັດລະບົບມາດຄະການໃຫ້ເຂັ້ມງວດ ເປັນຕົ້ນ: 1/ມາດຕະການດ້ານເງິນຕາ, 2/ ມາດຕະການດ້ານການເງິນ-ງົບປະມານ 3/ ມາດຕະການດ້ານການຜະລິດ, 4 ມາດຕະການດ້ານການຄ້າ ແລະ 5/ ມາດຕະການດ້ານຈິດຕະສາດ-ສັງຄົມ.

ສຳລັບ ຂະບວນການໂຕະມົນ ພວກເຮົາໄດ້ສຳເຣັດໂດຍພື້ນຖານ ກ່ຽວກັບຮ່າງແນວຄວາມຄິດກອງປະຊຸມໂຕະມົນ ປະຈຳປີ 2024 ໂດຍໄດ້ປຶກສາຫາລືຜ່ານກອງປະຊຸມສະຫຼູບການຈັດຕັ້ງປະຕິບັດວຽກງານຂະບວນການໂຕະມົນ 2023 (RTP Retreat 2023) ໃນຕົ້ນເດືອນພຶດສະພາ ທີ່ຜ່ານມາ ເຊິ່ງ ກອງເລຂາຂະບວນການໂຕະມົນ ກໍ່ໄດ້ນຳເອົາເນື້ອໃນຈິດຂອງການປຶກສາຫາລື ແລະຄຳຄິດເຫັນ ສັງລວມລາຍງານຕໍ່ຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ເປັນທີ່ຮຽບຮ້ອຍແລ້ວ ແລະກໍ່ໄດ້ດັດປັບເຂົ້າໃນ ຮ່າງສະບັບສຸດທ້າຍຂອງ ແນວຄວາມຄິດກອງປະຊຸມໂຕະມົນ ປະຈຳປີ 2024 ຕາມຄຳຄິດເຫັນຂອງ ກອງປະຊຸມ ແລ້ວ, ນອກນີ້ ກໍ່ໄດ້ສຳເລັດການເຜີຍແຜ່ ແຈ້ງການຂອງຫ້ອງວ່າການສຳນັກງານ ໃນການຈັດຕັ້ງຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈຳປີ 2023 ຕາມທິດຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໃຫ້ແກ່ກະຊວງຂະແໜງການ ແລະທ້ອງຖິ່ນ (ສຳເລັດຢູ່ ພາກກາງ ແລະ ພາກໃຕ້ ຈະສືບຕໍ່ຢູ່ພາກເໜືອ ໃນທ້າຍເດືອນ ມິຖຸນາ) ເພື່ອເປັນບ່ອນອີງ ແລະເປັນແນວທາງໃຫ້ແກ່ບັນດາທ່ານ ໃນການຈັດຕັ້ງປະຕິບັດ.

*ບັນດາທ່ານທີ່ມີກຽດ ທັງຫຼາຍ*

ໃນນາມປະທານຮ່ວມໃນກອງປະຊຸມມື້ນີ້ ຂ້າພະເຈົ້າໄດ້ຮັບຮູ້ວ່າ ບາງໜ່ວຍງານຂະແໜງການປຶກສາຫາລືກັບ ຄູ່ຮ່ວມພັດທະນາ ກໍ່ໄດ້ຈັດກອງປະຊຸມປຶກສາຫາລື ໃນລະດັບຕ່າງໆຂອງຕົນເປັນທີ່ຮຽບຮ້ອຍແລ້ວ (ໜ່ວຍງານເສດຖະກິດມະຫາພາກ, ໜ່ວຍງານຂະແໜງການການຄ້າ ແລະພັດທະນາພາກເອກະຊົນ , ໜ່ວຍງາຂະແໜງການສຶກສາທິການ ແລະ ໜ່ວຍງານອື່ນໆ... ຂໍສະແດງຄວາມຊົມເຊີຍ) ສະນັ້ນ, ຂ້າພະເຈົ້າຂໍຮຽກຮ້ອງມາຍັງໜ່ວຍງານຂະແໜງການທີ່ຍັງເຮັດບໍ່ທັນສຳເຣັດ ກອງປະຊຸມຂອງຕົນເອັງ ຈົ່ງຮີບຮ້ອນພາກັນຈັດຕັ້ງປະຕິບັດ ແລະ ສະຫຼູບສັງລວມບັນຫາພົ້ນເດັ່ນ ລາຍງານໃຫ້ແກ່ ກົມຮ່ວມມືສາກົນ, ກະຊວງແຜນການ ແລະການລົງທຶນ ໃນນາມກອງເລຂາຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ເພື່ອຊາບ ແລະເປັນຂໍ້ມູນ ຮັບໄຊ້ເຂົ້າໃນເນື້ອໃນຂອງກອງປະຊຸມໂຕະມົນ ຕາມຄຳແນະນຳກ່ຽວກັບຂະບວນການໂຕະມົນ (RTP Guideline) ທີ່ທາງກົມຮ່ວມມືສາກົນ ກະຊວງແຜນການ ແລະ ການລົງທຶນ ໄດ້ຈັດສົ່ງໃຫ້ບັນດາທ່ານໃນທີ່ຜ່ານມາແລ້ວ.

ອີກເທື່ອໜຶ່ງ, ຂໍສະແດງຄວາມຂອບໃຈມາຍັງ ທ່ານ ບັກໂຄເດັຍ ເບີຄານ໋ອຟ ຜູ້ປະສານງານອົງການສະຫະປະຊາຊາດ ປະຈໍາ ສປປ ລາວ ທີ່ໃຫ້ກຽດເປັນປະທານຮ່ວມກອງປະຊຸມ. ຂໍສະແດງຄວາມຂອບໃຈ ບັນດາທ່ານຮອງລັດຖະມົນຕີ, ຜູ້ຕາງໜ້າຈາກກະຊວງຂະແໜງການ, ສະຖານທູດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ ແລະ ບັນດາແຂກຜູ້ມີກຽດທຸກທ່ານ ທີ່ໄດ້ສະຫຼະເວລາເຂົ້າຮ່ວມກອງປະຊຸມໃນມື້ນີ້.

ສຸດທ້າຍນີ້, ຂໍອວຍພອນໄຊອັນປະເສີດມາຍັງ ທ່ານປະທານຮ່ວມ ແລະ ບັນດາທ່ານແຂກທີ່ມີກຽດ ທີ່ເຂົ້າຮ່ວມກອງປະຊຸມ ຈົ່ງມີສຸຂະພາບແຂງແຮງ ມີຄວາມຜາສຸກໃນຊີວິດສ່ວນຕົວ ແລະ ຄອບຄົວ ສືບຕໍ່ພັດທະນາ ສປປ ລາວ ໃຫ້ກ້າວໄປຢ່າງບໍ່ຢຸດຢັ້ງ.

ນະໂອກາດອັນສະຫງ່າລາສີນີ້ ຂ້າພະເຈົ້າຂໍກ່າວເປີດກອງປະຊຸມ ຢ່າງເປັນທາງການ ນັບແຕ່ວິນາທີນີ້ເປັນຕົ້ນໄປ

**(ຂໍຂອບໃຈ) !**

**----------------------------------**